ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

****

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
LAO AGROTECH PUBLIC COMPANY
ບ້ານ ໜອງຄັນຄູ, ເມືອງ ນາຊາຍທອງ,
ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ: 030 9882809,ແຟັກ:(856-21)

ເລກທີ:...0 5 3.../ລອທ

ນະຄອນຫຼວງວຽງຈັນ, ...2 0 MAR 2024...

ຮຽນ : ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ນັບຖື,
ທ່ານ ຜູ້ອຳນວຍການໃຫຍ່ຕະຫຼາດຫລັກຊັບລາວ ຈຳກັດ ທີ່ນັບຖື,
ທ່ານ ຜູ້ຖືຮຸ້ນ ຂອງ ບໍລິສັດ ລາວອາໂກຣເທັກ ມະຫາຊົນ ທີ່ນັບຖື,

ເລື່ອງ: ແຈ້ງມະຕິສຳຄັນຂອງກອງປະຊຸມສະພາບໍລິຫານສະໄໝວິສາມັນ ຄັ້ງທີ 01 ປະຈຳປີ 2024, ຄັ້ງວັນທີ 19/03/2024 ກ່ຽວກັບການລົງທຶນໃນບໍລິສັດ ລາວດີກຣີນ ຈຳກັດຜູ້ດຽວ (ບໍລິສັດລູກ) ແລະ ການໂອນຖ່າຍຊັບສິນບາງສ່ວນຂອງ "ລອທ" ເພື່ອປະກອບເປັນທຶນເຂົ້າບໍລິສັດ ລາວດີກຣີນ ຈຳກັດຜູ້ດຽວ (ບໍລິສັດລູກ)

- ອີງຕາມຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 004/ຄຄຊ, ລົງວັນທີ 28 ມັງກອນ 2019.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 330/ຕລຊລ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ (ລອທ) ຂໍຖືເປັນກຽດ ແຈ້ງມະຕິທີ່ສຳຄັນຂອງກອງປະຊຸມສະພາ ບໍລິຫານ ສະໄໝວິສາມັນ ຄັ້ງທີ 01 ປະຈຳປີ 2024 ຊຶ່ງຈັດຂຶ້ນໃນວັນທີ 19 ມີນາ 2024 ເວລາ 10:30 ໂມງ ໂດຍ ມີລາຍລະອຽດດັ່ງລຸ່ມນີ້:

1. ເຫັນດີຮັບຮອງໃນການລົງທຶນໃນບໍລິສັດ ລາວດີກຣີນ ຈຳກັດຜູ້ດຽວ (ບໍລິສັດລູກ).
2. ເຫັນດີຮັບຮອງການໂອນຖ່າຍຊັບສິນບາງສ່ວນຂອງ "ລອທ" ເພື່ອປະກອບເປັນທຶນເຂົ້າບໍລິສັດ ລາວດີກຣີນ ຈຳກັດຜູ້ດຽວ.

ດັ່ງນັ້ນ, ຈຶ່ງແຈ້ງຍັງທ່ານເພື່ອຮັບຊາບ

ດ້ວຍຄວາມນັບຖືເປັນຢ່າງສູງ
ຜູ້ອຳນວຍການໃຫຍ່

ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ Lao Agro Tech Public Company

ປອ. ເສດ ພັດທະນະມາດ